ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ລ.ລ NEWS
ພະແນກຮັ້ມນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

ຂະບວນການຍ່າງເພື່ອສຸຂະພາບ
ເພື່ອຂ່ຳນັບຮັບຕ້ອນວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 58 ປີ

ໃນຕອນເຊົ້າຂອງວັນທີ 03 ຕຸລາ 2026, ທີ່ ເຂດເສດຖະກິດພິເສດ ບຶງທາດຫຼວງ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດພິທີຂະບວນການຍ່າງເພື່ອສຸຂະພາບ ຂຶ້ນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ສະເຫຼີມໄຊ ກົມມະສິດ, ຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ພ້ອມດ້ວຍ ຄະນະຜູ້ວ່າການ ທຫລ, ລັດຖະມົນຕີ, ມີບັນດາຄະນະກົມ, ຄະນະ ສາຂາ ທຫລ, ພະນັກງານອາວຸໂສບຳນານ ທຫລ, ບັນດາທະນາຄານທຸລະກິດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ພະນັກງານຈາກພາຍໃນ ທຫລ ເຂົ້າຮ່ວມຢ່າງພ້ອມພຽງ.

ຂະບວນການຍ່າງເພື່ອສຸຂະພາບໃນຄັ້ງນີ້, ຈັດຂຶ້ນເພື່ອເປັນການສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 58 ປີ (07 ຕຸລາ 1968 – 07 ຕຸລາ 2026) ແລະ ຍັງເປັນການເຕົ້າໂຮມຄວາມສາມັກຄີ, ມິດຕະພາບ ແລະ ເປັນການຮັກສາສຸຂະພາບ ຂອງພະນັກງານໃນຂະແໜງທະນາຄານອີກດ້ວຍ ຊຶ່ງໄລຍະການຍ່າງແມ່ນ 2,5 ກິໂລແມັດ. ພ້ອມນີ້, ນອກຈາກຈະສ້າງຂະບວນການຍ່າງເພື່ອສຸຂະພາບແລ້ວ ທຫລ ຍັງມີການສ້າງຂະບວນການວິຊາ ສະເພາະ ແລະ ປາຖະກະຖາມູນເຊື້ອວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຕື່ມອີກ.

ບັນຍາກາດພາຍໃນງານໄດ້ດຳເນີນໄປຢ່າງຟົດຟື້ນ, ຜູ້ເຂົ້າຮ່ວມທຸກທ່ານໄດ້ພາກັນຢ່າງດ້ວຍຄວາມຫ້າວຫັນ ແລະ ສ້າງສີສັນ ໃຫ້ກັບງານຢ່າງມ່ວນຊື່ນ ເຮັດໃຫ້ກິດຈະກຳໃນຄັ້ງນີ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມຕາມຄາດໝາຍທີ່ວາງໄວ້.

ຂ່າວ-ພາບ: ຫ້ອງການ ທຫລ